## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 24 ມິຖຸນາ 2007 ( 6-24-2007 )

---

# ຈົ່ງຟື້ນຟູການອຸທິດຕົນໃນວັນນີ້

**ຂໍ້ພຣະຄັມພີໃນບົດຮຽນ:** ພບຍ 29:10-15;30:1-3,6,11-14,19-20

**ຄຳຖາມຂອງຊີວິດ:** ຂ້າພະເຈົ້າຈະຕ້ອງເຮັດຢ່າງໃດເພື່ອຈະຟື້ນຟູການອຸທິດຕົນຕໍ່ພຣະເຈົ້າໄດ້?

**ຄວາມຈິງໃນພຣະຄັມພີ:** ເມື່ອຄົນທີ່ເຊື່ອມາຫາພຣະເຈົ້າທີ່ບ່ອນນະມັສການ, ພວກເຂົາຕ້ອງສວຍເອົາໂອກາດນັ້ນເພື່ອຟື້ນຟູການອຸທິດຕົນຂອງເຂົາຕໍ່ພຣະອົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ເພີ້ມພູນການອຸທິດຕົນຕໍ່ພຣະເຈົ້າດ້ວຍ:

- ເຂົ້າໃຈວ່າພຣະເຈົ້າຕ້ອງການໃຫ້ທ່ານເລືອກເອົາການຮັກພຣະອົງ.
- ຍອມຮັບວ່າຈະຮັກພຣະເຈົ້າດ້ວຍສຸດຈິດສຸດໃຈຂອງທ່ານ.

ສິດຍາພິບານ ແມກ ດັຟຟີ ໂຈນ ຊຶ່ງເປັນພໍ່ເຖົ້າຂອງຂ້າພະເຈົ້າເຄີຍເວົ້າວ່າການໄປປະກາດຂ່າວປະເສີດຍາວເຖິງສອງອາທິດວ່າບໍ່ເປັນການຟື້ນຟູຈັກເທື່ອ. ສຳລັບເພິ່ນແລ້ວມັນແມ່ນ "ການປະຊຸມອັນຍືດຍາວ", ຢ່າງນ້ອຍທີ່ສຸດກໍເມື່ອຄົນທີ່ມາຮ່ວມປະຊຸມນັ້ນໄດ້ສະແດງອອກມາຊຶ່ງສັນຍານການຟື້ນຟູຝ່າຍວິນຍານເສັຽກ່ອນ. ຫລັງຈາກຄົນບາບທີ່ຫລົງຫາຍໄດ້ຮັບຄວາມພົ້ນແລ້ວ, ຫລືວ່າຄຣິສຕຽນທີ່ຖອຍຫລັງໄດ້ຖິ້ມໃຈເກົ່າເອົາໃຈໃຫມ່, ດັ່ງນັ້ນການປະຊຸມຈຶ່ງຈະຖືກເອີ້ນວ່າເປັນການຟື້ນຟູໄດ້.

ຄຣິສຕຽນບາງຄົນໃນທຸກວັນນີ້ ໄດ້ອະທິຖານດ້ວຍໃຈຈົດຈໍ່ສຳລັບການຟື້ນຟູຂອງຄຣິສຕະຈັກໃນອະເມຣິກາ. ມັນມີຜົນດີອັນໃຫຍ່ໃນເຣື່ອງວິນຍານ ແຕ່ວ່າໄດ້ມີຫລັກຖານພຽງເລັກນ້ອຍທີ່ວ່າຂ່າວປະເສີດຂອງຄຣິສຕຽນໄດ້ເກີດຜົນໃນຊີວິດຂອງຄົນຈຳນວນຫລາຍ. "ການເປັນຄຣິສຕຽນຕາມປະເພນີ" ອາດຈະບັນຍາຍວ່າເປັນຄຣິສຕຽນພໍອຸ່ນໆຂອງຄຣິສຕະຈັກຢ່າງຫລວງຫລາຍໃນອະເມຣິກາ.

ການຟື້ນຟູຝ່າຍວິນຍານຈະເກີດຂຶ້ນມາໄດ້ຢ່າງໃດ? ພຣະເຈົ້າເທົ່ານັ້ນທີ່ທຳໃຫ້ເກີດການຟື້ນຟູຝ່າຍຈິດວິນຍານອັນສຳຄັນທັງຫລາຍ. ພຣະຄັມພີໄດ້ສະແດງຢ່າງຊັດແຈ້ງວ່າພຣະເຈົ້າຕ້ອງການໄພ່ພົນຂອງພຣະອົງໃຫ້ຮັກສາຄວາມເຊື່ອຂອງເຂົາໃຫ້ມີຊີວິດຊີວາ ແລະເຕີບໃຫຍ່ຂຶ້ນຢ່າງສມ່ຳສເມີເພື່ອຟື້ນຟູການອຸທິດຕົນຕໍ່ພຣະອົງ.

## ສຶກສາພຣະຄັມພີ

### 1. ຈົ່ງກັບມາຫາພຣະເຈົ້າ ( ພບຍ 29:10-15 )

ພບຍ 12-28 ໄດ້ບັນຈຸການຊັກຊວນ, ການຕັກເຕືອນ, ແລະນຳເອົາພຣະທັມຂອງພຣະເຈົ້າມາໃຊ້ເພື່ອວ່າໃນເວລາອັນໃກ້ທີ່ຈະມາເຖິງນີ້ເມື່ອພວກອິສຣາເອັນຈະໄດ້ໄປຕັ້ງຖິ່ນຖານຢູ່ໃນແຜ່ນດິນແຫ່ງພຣະສັນຍາ. ການປ່າວປະກາດສ່ວນຫລາຍແມ່ນເປັນຄຳເວົ້າແລະເປັນສ່ວນນຶ່ງຂອງການປະຊຸມຟື້ນຄຳສັນຍາທີ່ໄດ້ເວົ້າເຖິງໃນບົດທີ 29-30.

ໂມເຊໄດ້ອະທິບາຍໃຫ້ຊາວອິສຣາເອັນທັງຫມົດ ແລະຄົນອື່ນທີ່ໄດ້ຊຸມນຸມນຳເຂົາວ່າໃນການກັບມາຫາພຣະເຈົ້ານັ້ນພວກເຂົາຈະໄດ້ມີໂອກາດຟື້ນຄຳສັນຍາຄືນໃຫມ່. ສຳລັບຄົນຫລາຍຄົນໃນທີ່ນັ້ນ, ມັນບໍ່ໄດ້ແມ່ນການຟື້ນຟູຄຳສັນຍາຄືນໃຫມ່ ແຕ່ວ່າມັນແມ່ນການຮັບຮອງເອົາຄຳສັນຍາຂອງອົງພຣະຜູ້ເປັນເຈົ້າໃນຄັ້ງທຳອິດ. ເຖິງຢ່າງໃດກໍດີ, ຖານະສ່ວນຕົວທີ່ກ່ຽວພັນກັບຄຳສັນຍານັ້ນມັນກໍເປັນໂອກາດທີ່ສະແດງເຖິງການອຸທິດຕົວອັນສົມບູນຕໍ່ອົງພຣະຜູ້ເປັນ

ເຈົ້າ.

ໃຜໄດ້ຮ່ວມປະຊຸມໃນສະພາ? ບັນດາຜູ້ນຳ ຫລືບາງທີກໍແມ່ນຜູ້ຕັດສິນທີ່ໄດ້ຖືກແຕ່ງຕັ້ງຈາກໂມເຊ, ຫົວໜ້າຊົນເຜົ່າ, ຜູ້ປົກຄອງ, ແລະພວກເຈົ້ານາຍກໍໄດ້ເຂົ້າຮ່ວມໃນທີ່ນັ້ນ. ແລະຊາວອິສຣາເອັນທັມມະດາ, ພວກຜູ້ຊາຍ, ພວກຜູ້ຍິງ, ແລະພວກເດັກນ້ອຍ. ລວມທັງພວກຄົນຕ່າງດ້າວທີ່ຢູ່ໃນຄ້າຍຂອງເຂົາເຈົ້າ. ພວກເຂົາບໍ່ມີການອະຄະຕິຕໍ່ກັນຕໍ່ໜ້າພຣະເຈົ້າ. ທຸກຄົນມາຫາພຣະເຈົ້າໄດ້ໂດຍບໍ່ມີຂໍ້ກີດກັນໃນດ້ານຖານະຕຳແໜ່ງ, ອາຍຸ, ເຊື້ອຊາດ, ເສດຖະກິດ, ຫລືວ່າເພດ. ທຸກຄົນກໍລ້ວນແຕ່ແມ່ນຄົນບາບທີ່ຕ້ອງການພຣະຄຸນຂອງພຣະເຈົ້າທັງນັ້ນ.

ເຖິງແມ່ນພວກເຮົາຈະມາພຣະເຈົ້າເປັນໝູ່ເປັນພວກກໍຕາມ, ພວກເຮົາກໍໄດ້ມາຫາພຣະອົງສ່ວນຕົວເໝືອນກັນ. ຊາວອິສຣາເອັນໄດ້ຖວາຍຕົນເປັນພວກເປັນໝູ່ຕໍ່ຄຳສັນຍາ ແຕ່ວ່າທຸກຄົນກໍໄດ້ເຂົ້າສູ່ຄຳໝັ້ນສັນຍາກັບພຣະເຈົ້າ. ໂມເຊໄດ້ບອກວ່າຄຳສັນຍານີ້ໄດ້ລວມເອົາທັງຄົນໃນຍຸກທີ່ຈະມາດ້ວຍ.

ຄຣິສຕຽນໄດ້ມີຄວາມຕ້ອງການຄຳສັນຍາຝ່າຍວິນຍານໃນທຸກວັນນີ້ ພວກເຂົາຕ້ອງເຂົ້າໃຈວ່າການຟື້ນຟູເຊັ່ນນີ້ມີຄວາມໝາຍຫລາຍກວ່າການຍ່າງອອກໄປທີ່ໜ້າກອງປະຊຸມໃນທຸກໆກອງປະຊຸມ. ບາງຄົນກໍອາດໄດ້ຖືກນຳພາຈາກອົງພຣະຜູ້ເປັນເຈົ້າແທ້ເພື່ອໃຫ້ຕອບສນອງການເຊື້ອເຊີນຂອງສິດຍາພິບານຕໍ່ໜ້າຝູງຊົນ ແຕ່ວ່າການມາຫາພຣະເຈົ້າແທ້ກໍມີຄ່າກວ່າການຕອບສນອງໃນເວລາການເຊື້ອເຊີນ. ເພາະມັນມີການຖິ້ມໃຈເກົ່າເອົາໃໝ່, ການນະມັສການຢ່າງຈິງໃຈ, ແລະການຈິງໃຈທີ່ຈະດຳເນີນຊີວິດຕາມແບບຂອງພຣະເຈົ້າ.

ການນະມັສການຮ່ວມກັບຄຣິສຕຽນຄົນອື່ນໆໃນຄຣິສຕະຈັກເປີດໂອກາດໃຫ້ເຮົາມາຫາພຣະເຈົ້າເພື່ອຟື້ນຟູໃຈໃໝ່. ທ່ານໄດ້ເຊື້ອເຊີນຄົນອື່ນມານະມັສການບໍ່? ທ່ານໄດ້ຕ້ອນຮັບແຂກຄົນມານະມັສການພຣະເຈົ້າກັບທ່ານບໍ່? ພວກເຮົາໄດ້ຕັ້ງໃຈເກີນໄປ ໃນສິ່ງທີ່ທ່ານຊອບໃນການນະມັສການຈົນວ່າໄດ້ລືມການປະສົບການອັນສຳຄັນຂອງທ່ານກັບພຣະເຈົ້າບໍ່? ພວກເຮົາຕ້ອງເຂົ້າມາໃນພຣະວິຫານຂອງພຣະເຈົ້າເພື່ອຮ່ວມເຮັດໃຫ້ຄົນທີ່ບໍ່ເຊື່ອໄດ້ມາເຊື່ອ ແລະຄຣິສຕຽນທີ່ຖອຍຫລັງໃຫ້ໄດ້ຮັບການຟື້ນຟູວິນຍານຄືນໃໝ່.

ການຟື້ນຟູອັນແທ້ຈິງບໍ່ໄດ້ເກີດຂຶ້ນໃນການນະມັສການດ້ວຍຈຳນວນຄົນຢ່າງຫລວງຫລາຍ. ມັນສາມາດເກີດຂຶ້ນໄດ້ດ້ວຍການນະມັສການສ່ວນຕົວຄືກັນ. ພຣະເຢຊູໄດ້ເຮັດເປັນຕົວຢ່າງວ່າພຣະອົງໄດ້ເຝົ້າພຣະບິດາສ່ວນຕົວໃນຫລາຍຫົວເຣື່ອງໃນປຶ້ມພຣະທັມຂ່າວປະເສີດ.

## ໒. ຈົ່ງກັບມາຟັງຄວາມພຣະເຈົ້າຢ່າງສຸດໃຈ ( ພບຍ 30:1-3,6 )

ໂມເຊໄດ້ບອກລ່ວງໜ້າໄວ້ວ່າອິສຣາເອັນຈະໄດ້ປະສົບກັບການອົພະຍົບຈາກແຜ່ນດິນແຫ່ງພຣະສັນຍາເພາະວ່າຄວາມບໍ່ຟັງຄວາມຂອງພວກເຂົາ. ແຕ່ວ່າເພິ່ນຍັງບອກອີກວ່າພວກພົລເມືອງຈະໄດ້ຖິ້ມໃຈເກົ່າເອົາໃຈໃໝ່, ກັບຄືນບ້ານມາເພື່ອເຊື່ອຟັງພຣະເຈົ້າ, ກັບໄປຮັບການປົວແປງໃໝ່ໃນແຜ່ນດິນ, ແລະພວກເຂົາຈະໄດ້ຖືກຟື້ນຄືນໃໝ່ໃນການອຸທິດຕົວຕໍ່ພຣະເຈົ້າ. ຈົ່ງສັງເກດເບິ່ງວ່າໂມເຊໄດ້ເປັນຜູ້ປະກາດພຣະທັມຜູ້ບໍ່ມີໃຜສາມາດທຽບໄດ້ໃນ ( ພບຍ 34:10-12 ).

ໃນພຣະບັນຍັດບົດທີ 30, ໂມເຊໄດ້ຕັກເຕືອນອິສຣາເອັນເຖິງເຣື່ອງພຣະພອນແລະການສາບແຊ່ງ ທີ່ເພິ່ນໄດ້ບອກເຂົາໄວ້. ເພິ່ນຍັງໄດ້ເວົ້າເຣື່ອງການກັບມາຈາກການອົພະຍົບມາຫາພຣະເຈົ້າຄືນໃໝ່ ແລະການປົວແປງເປັນເຣື່ອງຈິງ, ບໍ່ແມ່ນເປັນຂໍ້ແມ້. ພຣະເຈົ້າໃຫ້ໂມເຊໄດ້ເຫັນວ່າການລົງໂທດດ້ວຍການໃຫ້ອົພະຍົບໜີນີ້ຈະໃຫ້ພຣະເຈົ້າສົ່ງວິນຍານແຫ່ງການຖິ້ມໃຈເກົ່າເອົາໃຈໃໝ່ຈາກສ່ວນເລິກຂອງຫົວໃຈຂອງອິສຣາເອັນທີ່ໄດ້ເຊື່ອຟັງຄວາມພຣະອົງ. ໃຜກໍຕາມທີ່ໄດ້ທຳສິ່ງນີ້ຈະໄດ້ຮັບພຣະພອນ. ພຣະເຈົ້າຈະໄດ້ປົວແປຊັບສົມບັດຂອງເຂົາຄືນໃໝ່, ມີຄວາມເມດຕາສົງສານເຂົາຕໍ່ເຂົາ, ແລະຈະທ້ອນໂຮມພວກເຂົາຈາກການພັດຖິ່ນພັດຖານຂອງເຂົາ.

ໂມເຊຍັງໄດ້ບັນຍາຍຄວາມສຳພັນອັນໃກ້ສິດຂອງອິສຣາເອັນກັບພຣະເຈົ້າ ທີ່ຈະຕ້ອງມີດ້ວຍການເວົ້າວ່າອົງພຣະຜູ້ເຈົ້າຜູ້ເປັນພຣະເຈົ້າຂອງທ່ານຈະໄດ້ຜ່າຕັດຫົວໃຈຂອງທ່ານ ແລະໝາກຫົວໃຈຂອງລູກຫລານທັງຫລາຍດ້ວຍ. ຜົນທີ່ອິສຣາເອັນຈະໄດ້ຮັບຈາກຄວາມຮັກຕໍ່ພຣະເຈົ້າຄືພວກເຂົາຈະໄດ້ມີຊີວິດຢູ່ຕໍ່ໄປ.

ຄຣິສຕຽນທີ່ຫລຶບຖອຍຫລັງໃນເຣື່ອງການຖວາຍຕົວກັບພຣະເຈົ້າຄວນຈະໄດ້ຄິດໃຫ້ລະອຽດຄັກແນ່ໃນເຣື່ອງທິດທາງຊີວິດຂອງພວກເຂົາວ່າເປັນຢ່າງໃດ. ຈະບໍ່ມີຫວັງດີທີ່ຕົນຈະສາມາດໄດ້ມາຈາກການເປັນປໍຣະປັກກັບພຣະເຈົ້າຫລືວ່າຈາກການຖິ້ມປະຫາງຂອງພຣະອົງ. ອົງພຣະຜູ້ເປັນເຈົ້ານັ້ນໃຈເຢັນ ແລະເຕັມໄປດ້ວຍຄວາມເມດຕາຕໍ່ໄພ່ພົນຂອງພຣະອົງ. ແທນທີ່ຈະປະຕິເສດພຣະຄຸນຂອງພຣະອົງ, ພວກເຮົາຄວນສາຣະພາບຄວາມບາບ, ຟື້ນຄືນຄວາມສັມພັນກັບພຣະອົງ, ແລະກັບຄືນມາເຊື່ອຟັງພຣະອົງດ້ວຍຫມົດຈິດຫມົດໃຈ.

## 3. <u>ຈົ່ງຮູ້ວ່າທ່ານສາມາດເຂົ້າໃຈແລະຟັງຄວາມ</u> ( ພບຍ 30:11-14 )

ໂມເຊໄດ້ບອກຄົນອິສຣາເອັນວ່າຄຳສັ່ງຂອງພຣະອົງໄດ້ບອກໃຫ້ຮູ້ແລ້ວ ແລະກໍບໍ່ໄດ້ຍາກທີ່ຈະເຊື່ອຟັງ ແທ້ຈິງພຣະເຈົ້າໄດ້ໃຫ້ຄຳສັ່ງນັ້ນໄວ້ໃນປາກແລະໃນຫົວໃຈຂອງພວກເຈົ້າ. ໂປໂລໄດ້ເວົ້າເຣື່ອງນີ້ອີກເທື່ອນຶ່ງເມື່ອເພິ່ນໄດ້ເທສນາເຣື່ອງຄວາມພົ້ນໂດຍຜ່ານທາງຄວາມເຊື່ອໃນພຣະຄຣິດ ( ຣມ 10:8 ). ຄຳສັ່ງຂອງພຣະເຈົ້ານັ້ນຢູ່ໃກ້ແທ້ໆ ແລະທັງຈະແຈ້ງດ້ວຍ. ຖ້ອຍຄຳຂອງພຣະອົງນັ້ນບໍ່ໄດ້ບັງຄັບຄົນໃດຄົນນຶ່ງຂຶ້ນໄປຮັບເອົາໃນຟ້າສວັນ ຫລືວ່າຈະຂ້າມຟາກທະເລເພື່ອຈະຮັບເອົາ. ຈຸດປະສົງຂອງພຣະເຈົ້າໃນການສົ່ງຖ້ອຍຄຳນີ້ແມ່ນເພື່ອຄົນທັງຫລາຍຈະໄດ້ທຳຕາມ.

ລາງເທື່ອຄຣິສຕຽນກໍໄດ້ຫາທາງແກ້ຕົວໃນຄວາມບົກພ່ອງໃນເຣື່ອງການຖວາຍຕົວຕໍ່ພຣະເຈົ້າເພາະວ່າພວກເຂົາເວົ້າວ່າເຂົາບໍ່ເຂົ້າໃຈ ຫລືວ່າໄຈ້ແຍກບໍ່ໄດ້ວ່າພຣະປະສົງຂອງພຣະເຈົ້າສຳລັບການຕັດສິນໃຈອັນສະເພາະເຈາະຈົງ ຫລືໃນສະພາບທີ່ພິເສດ. ພວກເຮົາຕ້ອງຟັງຄວາມຄຳສັ່ງອັນຈະແຈ້ງຂອງພຣະເຈົ້າໃນພຣະຄັມພີ ເມື່ອກຳລັງຊອກຫາຄວາມເຂົ້າໃຈໃນເຣື່ອງພຣະປະສົງຂອງພຣະອົງສຳລັບສະພາບການອັນເຈາະຈົງໃນຊີວິດຂອງເຮົາ.

ສຳລັບຄຣິສຕຽນທີ່ເວົ້າວ່າ, “ໂອອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍບໍ່ສາມາດຈະທຳສິ່ງທີ່ພຣະອົງໃຫ້ຂ້ານ້ອຍເຮັດໄດ້” ກໍໄດ້ປະຕິເສດຄວາມເປັນພຣະເຈົ້າຂອງພຣະອົງ ແລະໄດ້ສະແດງໃຫ້ເຫັນຄວາມບໍ່ໄວ້ວາງໃຈໃນພຣະອົງ. ພວກເຮົາຕ້ອງເຊື່ອສິ່ງນັ້ນດ້ວຍຄວາມຫມັ້ນໃຈ ໃນສິ່ງໃດກໍຕາມທີ່ພຣະເຈົ້າໄດ້ສັ່ງໃຫ້ເຮົາເຮັດ, ວ່າເຮົາຕ້ອງເຮັດ. ຄວາມອະພັຍຂອງເຮົາໃນພຣະຄຣິດ ແລະໃນອຳນາດຂອງພຣະອົງໃນເຮົາ ດ້ວຍການຊົງສະຖິດຂອງພຣະວິນຍານບໍຣິສຸດໃນເຮົາ ໄດ້ສັນຍາວ່າເຮົາຈະສາມາດຟັງນ້ຳພຣະທັຍຂອງພຣະອົງໄດ້ໃນທຸກໆສະພາບການ ( ຟລປ 4:13 ).

## 4. <u>ຈົ່ງເລືອກເອົາຊີວິດໃນວັນນີ້</u> ( ພບຍ 30:19-20 )

ໂມເຊທຳຫນ້າທີ່ເປັນເຫມືອນຜູ້ແທນຂອງພຣະເຈົ້າຈັດການໃນເຣື່ອງຄຳສັນຍາ, ໄດ້ຊຸກຍູ້ຊາວອິສຣາເອັນໃຫ້ເລືອກເອົາຊີວິດແທນຄວາມຕາຍ, ແລະເລືອກເອົາພຣະພອນແທນການສາບແຊ່ງ ດ້ວຍການຟື້ນຄືນການອຸທິດຕົວຕໍ່ອົງພຣະຜູ້ເປັນເຈົ້າ. ຊີວິດແລະພຣະພອນມີການເຊື່ອມຕໍ່ກັນ; ຄວາມຕາຍແລະການສາບແຊ່ງມີການເຊື່ອມຕໍ່ກັນ. ໃນພິທີນີ້, ສັນຍາໃດກໍບໍ່ສຳເຣັດເສັດສິ້ນໄດ້ໂດຍປາສຈາກສັກຂີພະຍານ. ຟ້າດິນໄດ້ຖືກເອີ້ນໃຫ້ມາເປັນພະຍານການສນອງຕອບຂອງອິສຣາເອັນ ແລະໃຫ້ມາຈົດຈຳ, ມາເປັນພະຍານຂອງການຕັດສິນໃຈຈົນເຖິງຄົນໃນລຸ້ນຕໍ່ໄປ.

ບໍ່ມີຫວັງນ້ອຍໄປກວ່າຊີວິດແລະຄວາມຕາຍອັນເປັນເດີມພັນໃນພຣະພອນແລະການສາບແຊ່ງຂອງຄຳສັນຍາ. ຖ້າທຳຕາມ, ກໍມີຊີວິດຢ່າງມີຄວາມສຸກ ແລະມີສາມັກຄີທັມກັບພຣະເຈົ້າ. ຖ້າບໍ່ຟັງຄວາມ, ການທຳລາຍກໍຈະມາເຖິງທ່ານໃນເວລາບໍ່ນານ. ໂດຍຕິດຕາມການສັ່ງໃຫ້ເລືອກເອົາຊີວິດໃນທຳອິດນັ້ນ, ໂມເຊໄດ້ສັ່ງໃຫ້ອິສຣາເອັນໄດ້ເຮັດສາມຢ່າງຄື, ໃຫ້ຮັກອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ, ໃຫ້ຟັງຄວາມພຣະອົງ, ແລະໃຫ້ຊື່ສັດຕໍ່ພຣະອົງ. ມັນເປັນຄຳສັ່ງອັນຍິ່ງໃຫຍ່ຕໍ່ຄົນທີ່ເຊື່ອໃຫ້ປະຕິບັດຕາມ. ທ່ານຄິດວ່າຄຣິສຕະຈັກຂອງພວກເຮົາຈະແຕກຕ່າງຫລາຍປານໃດຖ້າວ່າພວກເຮົາໄດ້ທຳຕາມຂໍ້ຄຳສັ່ງເຫລົ່ານີ້? ໂມເຊໄດ້ໃຫ້ເຫດຜົນວ່າ ເປັນຫຍັງໄພ່ພົນຂອງພຣະເຈົ້າຈິ່ງຕ້ອງນັບຖືຄຳສັ່ງເຫລົ່ານີ້ວ່າ: ເພາະວ່າພຣະເຈົ້າເປັນຊີວິດຂອງເຈົ້າ, ແລະພຣະອົງຈະເຮັດໃຫ້ຊີວິດຂອງພວກເຈົ້າຍືນຍາວຢູ່ໃນແຜ່ນດິນທີ່ພຣະອົງໄດ້ສາບານວ່າຈະມອບໃຫ້ບັນພະບຸຣຸດຂອງພວກທ່ານຄື, ອັບຣາຮາມ, ອີຊາກ, ແລະຢາໂຄບ. ໃນ ຢຮ 14:6 ພຣະເຢຊູໄດ້ປະກາດວ່າ, “ເຮົາເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ.” ພຣະເຢຊູຍັງໄດ້ເວົ້າ

ເຖິງຊີວິດອັນສົມບູນໃນປະຈຸບັນ ແລະຊີວິດໃນອະນາຄົດດ້ວຍ. ຊີວິດນີ້ເປັນມາດ້ວຍຄຳສນອງຕອບໂດຍກົງດ້ວຍການເຊື່ອຟັງຂອງພວກເຮົາຕໍ່ພຣະຄຳຂອງພຣະເຈົ້າ.

ຄຣິສຕຽນ ແລະຄົນທີ່ບໍ່ເຊື່ອ, ພວກເຮົາບໍ່ຄວນຈະຫລີກລ້ຽງຫລືເລື່ອນການເຊື້ອເຊີນຂອງພຣະເຈົ້າທີ່ເວົ້າກັບເຮົາໃຫ້ມາຫາພຣະອົງດ້ວຍທາງຄວາມເຊື່ອໃນພຣະຄຣິດ ຫລືວ່າໃຫ້ຟື້ນການອຸທິດຕົນຕໍ່ພຣະອົງຄືນໃຫມ່. ວັນນີ້ເປັນວັນເວລາທີ່ພວກເຮົາຈະໄດ້ສະແດງອອກມາເຖິງຄວາມກະຕືລືລົ້ນໃນການທີ່ຈະຕິດຕາມອົງພຣະຜູ້ເປັນເຈົ້າ. ຈົ່ງຕັດສິນໃຈເສັຽດຽວນີ້ເພື່ອຈະໃຫ້ການອຸທິດຕົນກັບອົງພຣະຜູ້ເປັນເຈົ້າຟື້ນຕົວຂື້ນມາໃຫມ່, ແລະທ່ານຈະໄດ້ປະສົບດ້ວຍຕົນເອງວ່າອົງພຣະຜູ້ເປັນເຈົ້າໄດ້ມີແຜນການໃຫ້ກັບທ່ານຫມົດທຸກຢ່າງແລ້ວ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.